# ແນວຄິດທາງການເມືອງ

## ໃນມະຫາກາບ ທ້າວຮຸ່ງ ທ້າວເຈືອງ






ພຣະອາຈານ ໄພວັນ ມາລາວົງ

2014

# ແນວຄິດທາງການເມືອງ ໃນມະຫາກາບ ທ້າວຮຸ່ງທ້າວເຈືອງ

ຄົ້ນຄວ້າໂດຍ :

ພຣະອາຈານ ໄພວັນ ມາລາວົງ



ຈັດພິມໂດຍ :

ຄອບຄົວ

ທ່ານ ເຈືອງ ສິມບູນຂັນ

2014

# ຄະນະຈັດທຳ

ປື້ມ "**ແນວຄິດທາງການເມືອງ ໃນມະຫາກາບທ້າວຮຸ່ງ ທ້າວເຈືອງ**"

ຄົ້ນຄວ້າໂດຍ : **ພຣະອາຈານ ໄພວັນ ມາລາວົງ**

© ສະຫງວນລິຂະສິດ

- ບັນນາທິການ : **ພຣະອາຈານ ເມືອງພິລັກ ໂຊຕິທອນ**
- ພິສູດອັກສອນ : **ພຣະອາຈານ ຈັນທະວິສຸກ ລັດຕະນາ**
- ອອກແບບ-ຈັດໜ້າ : **ທອງເດືອນ ທຳມະວົງ**
- ອອກແບບປົກ : **ທອງເດືອນ ທຳມະວົງ**
- ຕີພິມຄອມພິວເຕີ : **ພຣະ ຄຳພຸດ ເທບພະນົມ**

---

ພິມທີ່ : ໂຮງພິມສີສະຫວາດ
ພິມຄັ້ງທີ : I ປີ 2014
ຂະໜາດພິມ : 17 X 23 ຊມ
ຈຳນວນພິມ : 2,000 ຫົວ
ຈຳນວນໜ້າ : 204 ໜ້າ
ເລກທະບຽນພິມ : 479/ພຈ26112014
ISBN : 978-9932-419-00-5

# ສາລະບານ

ຄຳນຳສຳນັກພິມ

ຄຳປາລົບ

**1. ຄວາມເປັນມາ ແລະ ຄວາມສຳຄັນ ຂອງວັນນະຄະດີມະຫາກາບທ້າວຮຸ່ງທ້າວເຈືອງ**

1.1 ຄວາມເປັນມາ ແລະຄວາມສຳຄັນຂອງບັນຫາ 10

1.2 ວັດຖຸປະສົງຂອງການຄົ້ນຄວ້າ 16

1.3 ຂອບເຂດຂອງການຄົ້ນຄວ້າ 17

1.4 ປະໂຫຍດຄາດວ່າຈະໄດ້ຮັບ 18

**2. ນິທານຕຳນານ ແລະເລື່ອງເລົ່າພື້ນເມືອງ**

2.1 ເລື່ອງທ້າວຮຸ່ງທ້າວເຈືອງໂດຍສັງເຂບ 19

2.2 ໄຫເຫລົ້າເຈືອງ 28

2.3 ທ້າວເຈືອງ 31

**3. ຮູບປະພັນ ແລະ ຫລັກສັນທະກະວີ**

3.1 ຄວາມໝາຍ ແລະ ຄວາມຍິ່ງໃຫຍ່ ມະຫາກາບທ້າວຮຸ່ງທ້າວເຈືອງ 38

3.2 ຜູ້ແຕ່ງ ແລະຍຸກສະໄໝການແຕ່ງ 40

3.3 ດ້ານການປະ ພັນ ແລະສັນທະກະວີ 41

3.3.1 ຮູບແບບຄຳປະພັນໃນມະຫາກາບທ້າວຮຸ່ງທ້າວເຈືອງ ຕາມແນວຄວາມຄິດຂອງຜູ້ຄົ້ນຄວ້າຜ່ານມາ 49
3.3.2. ຮູບແບບຄຳປະພັນໃນມະຫາກາບທ້າວຮຸ່ງທ້າວເຈືອງ ຕາມແນວຄວາມຄິດຂອງຜູ້ຄົ້ນຄວ້າ 52
1). ໂຄງວິຊຸມາລີ (ສາຍຟ້າແມບ)
2). ໂຄງ 4 ສຸພາບ ມະຫາສິນທຸມາລີ (ສາຍນ້ຳໃຫຍ່ ຫລືນ້ຳຕ້ອງຕາດ) 54
3). ໂຄງ 5ມັນທຸກະຄະຕິ (ໂຄງກົບເຕັ້ນ) 55
4). ໂຄງຈິດລະດາ(ໂຄງເຄືອງາມ) 56
5). ໂຄງຕິພິທະພັນ(ອັກສອນຄົບທັງສາມ) 57
6). ໂຄງຈັດຕະວາທັນທີ(ສຳຜັດຄຳທີສີ່) 58
7). ໂຄງວິວິທະມາລີ (ເຄືອກັຽວໄມ້) 59
8). ໂຄງບາດກຸນຊອນ (ຊ້າງທຽມແມ່) 61
9). ໂຄງບຸດສະບາຣັກຣ້ອຍ(ສາວນ້ອຍຮ້ອຍດອກໄມ້) 62
10). ໂຄງກິນະລະເກັບບົວ(ບ່າວເກັບດອກໄມ້) 63

**4. ຄວາມຄິດທາງການເມືອງ ການປົກຄອງບູຮານ**

**4.1 ແນວຄວາມຄິດກ່ຽວກັບຊົນຊັ້ນຜູ້ປົກຄອງ** 69
4.1.1 ແນວຄວາມຄິດກ່ຽວກັບຜູ້ນຳຫລືກະສັດບູຮານ 72
4.1.2 ຜູ້ນຳຫລື ກະສັດຕ້ອງສືບເຊື້ອສາຍມາຈາກແຖນ 77
4.1.3 ຜູ້ນຳກະສັດຕ້ອງມີຄວາມເກັ່ງກ້າ,ອາດຫານ ແລະ ຍຸດທະສາດສົງຄາມ 81
4.1.4 ຜູ້ປົກຄອງຄວນຍຶດໝັ້ນໃນຮີດເຈົ້າຄອງຂຸນ 90
4.1.5 ແນວຄວາມຄິດກ່ຽວກັບຂຸນນາງ 92
1). ຂຸນນາງ 95
2). ປະຊາຊົນ 96
3). ຂ້ອຍ ຫລື ທາດ 98

4.1.6 ການປະທານລາງວັນໃຫ້ແມ່ທັບ 99
4.1.7 ຫລັກການປົກຄອງຄຳສອນ,ຈາຣີດບູຮານ
ແລະກົດໝາຍ ເພື່ອຄຸ້ມຄອງສັງຄົມ 112
1). ທ້າວຮຸ່ງສອນອ້າຍຄວ່າງປົກຄອງເມືອງປະກັນ 114
2). ນາງຂື່ມສັ່ງສອນນາງອົ້ວຄ່າ 120
3). ນາງເມັງສັ່ງສອນນາງງ້ອມມ່ວນ 127

**4.2 ແນວຄິດຂະຫຍາຍ ແລະ ຮັກສາລັດໃນສະໄໝບູຮານ**

4.2.1 ແນວຄິດກ່ຽວກັບກຳເນີດຊຸມຊົນ
ແລະສ້າງບ້ານແປງເມືອງ 137
4.2.2 ການເຮັດສົງຄາມເພື່ອຂະຫຍາຍລັດ 143
4.2.3 ການປະສານຄວາມສຳພັນລະຫວ່າງລັດ
ດ້ວຍການແຕ່ງດອງ 145
4.2.4 ຫລັກການທູດ ແລະການເຈລະຈາ 154
4.2.5 ບົດບາດແມ່ຍິງໃນດ້ານການເມືອງ
ແລະ ເປັນຜູ້ປົກຄອງ 169
4.2.6 ບົດບາດແມ່ຍິງໃນດ້ານການເປັນຜູ້ນຳ,
ການຈັດກອງທັບ ແລະອອກຮົບຕໍ່ສູ້ 172
4.2.7 ກຸ່ມຊາດພັນ 180

**5. ບົດສະຫລຸບ ແລະຂໍ້ສະເໜີ**

5.1 ສະຫລຸບຜົນການຄົ້ນຄວ້າ 184
5.2 ຂໍ້ສະເໜີ 187

ບັນນານຸກົມ

# ຄໍາບໍາສໍານັກພິມ

ໃນນາມສໍານັກພິມ ເຊິ່ງມີແນວຄິດທ້ອນໂຮມໜັງສືບູຮານ; ໂດຍໃນລັກສະນະທ້ອນໂຮມ, ຮຽບຮຽງ, ຄົ້ນຄວ້າ, ວິໄຈ ໃນລັກສະນະເຊັ່ນນີ້ ທີ່ຢູ່ໃນຂອບຄ່າຍສ້າງສັນ ສົ່ງເສີມໃຫ້ມີການພັດທະນາການສຶກສາແລ້ວ; ທາງພວກເຮົາຍິນດີສົ່ງເຄາະ ອານຸເຄາະດ້ວຍຄວາມເຕັມໃຈ. ໂດຍບໍ່ມີຜົນກໍາໄລໄດ້ເສຍໃດໆ ມາແອບແຝງ.

ໃນນາມສໍານັກພິມ ແລະ ໃນນາມສ່ວນຕົວຂໍອະນຸໂມທະນາສາທຸການໃນງານຄົ້ນຄວ້າຂອງພຣະອາຈານ ໄພວັນ ມາລາວົງ ໄວ້ນະທີ່ນີ້ດ້ວຍ.

ວັດວຽງຈະເລີນ, 22/11/2014

**ສໍານັກພິມໂຊຕິປັນຍາ**

# ຄຳປາລົບ

ວັນນະຄະດີ"ທ້າວຮຸ່ງທ້າວເຈືອງ"ແມ່ນມະຫາກາບທີ່ຍິ່ງໃຫຍ່ໃນອຸສາຄະເນ ມີຄວາມຍາວເຖິງ 5000 ບາດກອນ ເປັນຂໍ້ມູນທາງປະຫວັດສາດສຳຄັນເລື່ອງໜຶ່ງຂອງຊົນຊາດລາວ ແລະ ພາສາທີ່ບັນທຶກເປັນພາສາລາວບູຮານ ທາງພາກເໜືອຍາກແກ່ການເຂົ້າໃຈ. ບໍ່ມີວັນນະຄະດີລາວເລື່ອງໃດຈະຍິ່ງໃຫຍ່ ແລະຍາວຄືກັບເລື່ອງນີ້ ຕົວລະຄອນກໍມີໃນປະຫວັດສາດ ແລະ ເປັນວິລະບູລຸດທາງວັດທະນະທຳດ້ວຍ.

ຜູ້ຂຽນສົນໃຈວັນນະຄະດີລາວບູຮານມາແຕ່ດົນນານ ໄລຍະຮຽນຢູ່ມັດທະຍົມຕອນຕົ້ນ ສຶກສາມາເລື້ອຍໆ ຕັ້ງໃຈໄວ້ວ່າ ຈະສຶກສາວັນນະຄະດີເອກຂອງລາວ 3 ເລື່ອງໃຫ້ແຕກສານເຊັ່ນ: ພຣະເຫວດສັນດອນ, ສັງສິນໄຊ ແລະທ້າວຮຸ່ງ ທ້າວເຈືອງ. ເມື່ອຈົບມັດທະຍົມຕອນປາຍແລ້ວ ກໍໄດ້ສຶກສາສາຍອັກສອນສາດ ພາສາລາວ-ວັນນະຄະດີ. ໄລຍະທີ່ຮຽນຢູ່ກໍໄດ້ຂຽນໜັງສືເລື່ອງ **"ພຣະເຫວດສັນດອນ: ທັດສະນະວິຈານ"** ໃຊ້ເວລາຫລາຍປີສົມຄວນປັບປຸງບົດຂຽນມາເລື້ອຍໆ, **"ເລື່ອງສັງສິນໄຊ"** ວິເຄາະມູມມອງຕ່າງໆເຊັ່ນ: ເສດຖະກິດ, ສັງຄົມ, ວັດທະນະທຳ, ປະຫວັດສາດ, ການສຶກສາ, ການເມືອງ ເປັນຕົ້ນ ແລະ"ເລື່ອງທ້າວຮຸ່ງທ້າວເຈືອງ"ກໍໄດ້ທຸ້ມເທຊີວິດໃສ່ທີ່ສຸດ ຄືຍາກຂຽນວິເຄາະໃນມູມມອງຕ່າງໆໃຫ້ດີທີ່ສຸດເທົ່າທີ່ຈະເຮັດໄດ້ ເມື່ອອ່ານໄປຫລາຍຫລົບຫລາຍຕ່າວຈຶ່ງເຫັນມູມມອງຕ່າງໆ ໜ້າສຶກສາຄົ້ນຄວ້າ.

ເມື່ອມາສຶກສາຕໍ່ປະລິນຍາໂທ ສາຂາວັນນະຄະດີລາວ ມະຫາວິທະຍາໄລແຫ່ງຊາດ ກໍໄດ້ສະເໜີຫົວຂໍ້ **"ແນວຄິດທາງການເມືອງໃນມະຫາກາບ ທ້າວຮຸ່ງ ທ້າວເຈືອງ"** . ຜູ້ຂຽນໄດ້ສະໜິດສະໜົມກັບລູກສາວມະຫາ ສິລາ ວິລະວົງຜູ້ເພິ່ນຄົ້ນພົບມະຫາກາບເລື່ອງນີ້ ແລະ ປະລິວັດອອກມາສູ່ໂລກ ຜູ້ຂຽນເອີ້ນເພິ່ນວ່າ ແມ່ປ້າດວງເດືອນ ເພິ່ນເຄີຍເຮັດວຽກຄົ້ນຄວ້າກ່ຽວກັບທ້າວຮຸ່ງ ທ້າວເຈືອງມາຫລາຍທັງໄດ້ແປຈາກຄຳກອນມາເປັນຄຳຮ້ອຍແກ້ວຄຽງຄູ່ກັນໄປເພິ່ນກໍໄດ້ໃຫ້ແງ່ຄິດ ແລະ ຂໍ້ມູນຫລາຍຢ່າງໃນການວິເຄາະເຫດການສຳຄັນໃນບົດເລື່ອງ

ຜູ້ຂຽນປະວໍລະນາກັບເພິ່ນວ່າ ຈະຄົ້ນຄວ້າ ວິໄຈວັນນະຄະດີບູຮານເລື່ອງນີ້ໃຫ້ເຫັນຄຸນຄ່າທີ່ສຸດ ເພິ່ນສຸດແສນດີໃຈທີ່ເຫັນຄົນໜຸ່ມນ້ອຍໄຝ່ສຶກສາວັນນະຄະດີລາວບູຮານແບບນີ້ທັງສະໜັບສະໜູນຄວາມຄິດ, ອຳນວຍຂໍ້ມູນຕ່າງໆ ທັງພາສາລາວ, ຕ່າງປະເທດ ແລະ ປັດໄຈຈຳນວນໜຶ່ງໃຫ້ແກ່ການຄົ້ນຄວ້າ.

ຜູ້ຂຽນອ່ານທ້າວຮຸ່ງ ທ້າວເຈືອງຈົບຮ້ອຍກວ່າເທື່ອ ບໍ່ນັບທັງງານວິໄຈປະລິນຍາໂທ ແລະເອກທີ່ຄົ້ນຄວ້າຜ່ານມາ, ຍິ່ງອ່ານເທົ່າໃດຍິ່ງເກີດຄວາມອອນຊອນໃນໃຈມ່ວນນຳອັດຖະລົດພາສາສາດ, ເນື້ອຫາຫລາຍເທົ່ານັ້ນ. ເມື່ອຜູ້ຂຽນຂຶ້ນຫ້ອງສອນວັນນະຄະດີ ກໍມັກເອົາເລື່ອງນີ້ມາເວົ້າສູ່ນັກສຶກສາຟັງຕະຫລອດໃນມູມມອງຕ່າງໆ ຫລາຍຄົນກໍເກີດຄວາມສົນໃຈ ລວມທັງວັນນະຄະດີເລື່ອງອື່ນໆດ້ວຍ.

ເຖິງຢ່າງໃດກໍຕາມມະຫາກາບເລື່ອງນີ້ ຍັງຄົງຄວາມຍິ່ງໃຫຍ່ທາງດ້ານການປະພັນ ຫລື ຮູບແບບການປະພັນ, ດ້ານຮີດຄອງ ປະເພນີ-ວັດທະນະທຳ ແລະດ້ານປະຫວັດສາດ ໃນໜັງສືເຫລັ້ມນີ້ ແມ່ນວິເຄາະມູມມອງການເມືອງຕ່າງໆ ໃນແນວຄິດການປົກຄອງສະໄໝບູຮານ ທີ່ສ້າງນະຄອນລັດຂຶ້ນໃນພູມມີພາກອຸສາຄະເນ ແລະ ຄວາມສຳພັນກັບລັດຕ່າງໆ.

ຜູ້ຂຽນຫວັງຢ່າງຍິ່ງວ່າໜັງສືເຫລັ້ມນີ້ຄົງໃຫ້ຄຸນຄ່າແກ່ວົງການຄົ້ນຄວ້າວັນນະຄະດີບູຮານບໍ່ຫລາຍກໍໜ້ອຍ. ຫາກຄຸນງາມຄວາມດີບຸນກຸສົນເກີດຈາກຂຽນໜັງສືເຫລັ້ມນີ້ ຂໍອຸທິດບູຊາແດ່ພໍ່ແມ່ຜູ້ໃຫ້ເລືອດເນື້ອຊີວິດເກີດມາ. ພິເສດຂໍອຸທິດແດ່ **ພໍ່ເຈືອງ ສົມບູນຂັນ** ຢາກໃຫ້ພຣະລູກຊາຍເປັນນັກຄົ້ນຄວ້າວັນນະຄະດີບູຮານລາວ ແລະ ທັງສິ່ງເສີມທຶນການສຶກສາ; ເສຍດາຍບໍ່ເຫັນຜົນງານຄົ້ນຄວ້າຊິ້ນນີ້ ຂໍໃຫ້ດວງວິນຍານຂອງເພິ່ນຈົ່ງໄປສູ່ສຸຄະຕິດີງາມ ເວັ້ນຈາກອະບາຍຕ່ຳຊາມທຸກປະການດ້ວຍເທີ້ນ.

ພິເສດຂໍອະນຸໂມທະນາອາຈານ**ແມ່ດາຣາວັນພອນແກ້ວ**ພັນລະຍາຂອງທ່ານ ເຈືອງ ສົມບູນຂັນ ທີ່ຈັດພິມໜັງ ສືວັນນະກຳເຫລັ້ມນີ້ ອອກສູ່ສາຍຕາມະຫາຊົນ ແລະ ແຈກຢາຍສູ່ໂຮງຮຽນຕ່າງໆ ເປັນທຳມະທານ ຂໍອະນຸໂມທະນາມະໂອກາດນີ້.

**ພຣະອາຈານ ໄພວັນ ມາລາວົງ**

22/09/2014



ຫີນຕັ້ງກຸ່ມໃຫຍ່ຢູ່ຕາມເສັ້ນທາງປ່າຄາ-ປ່າແລ
ແຂວງຫົວພັນ ສືບເນື່ອງຈາກຍຸກທ້າວເຈືອງ

# ບົດທີ ໑
# ຄວາມເປັນມາ ແລະ ຄວາມສໍາຄັນ

## 1.1 ຄວາມເປັນມາ ແລະ ຄວາມສໍາຄັນຂອງບັນຫາ

ວັນນະຄະດີ ເປັນມໍລະດົກທາງວັດທະນະທໍາອັນລໍ້າຄ່າຢ່າງໜຶ່ງ ທີ່ຕົກທອດມາແຕ່ອະດີດ ດິນແດນອານາຈັກລາວລ້ານຊ້າງ, ຈົນໄດ້ຂະໜານນາມວ່າເປັນດິນແດນທີ່ອຸດົມສົມບູນໄປດ້ວຍວັດທະນະທໍາອັນເກົ່າແກ່ ໂດຍສະເພາະທາງດ້ານວັນນະກໍາທີ່ປາກົດແຜ່ຫລາຍທັງວັນນະຄະດີມຸກຂະປາຖະ ແລະ ວັນນະຄະດີຂຽນອັນໄດ້ສະທ້ອນລັກສະນະທ້ອງຖິ່ນຄວາມເປັນຊາດຢ່າງໂດດເດັ່ນ. ນັບຈາກສະໄໝສະຖາປານາອານາຈັກໂດຍພະເຈົ້າຟ້າງຸ່ມ ໃນສະຕະວັດທີ XIV ເຖິງປາຍສະຕະວັດທີ XVII ໄລຍະນີ້ ປະຫວັດສາດອານາຈັກລາວລ້ານຊ້າງ ມີຄວາມລະອຽດຫລາຍຍິ່ງຂຶ້ນ ເນື່ອງຈາກວ່າຫລັກຖານທາງປະຫວັດສາດ ເຊິ່ງຂຽນເປັນລາຍລັກອັກສອນເພີ່ມປະລິມານຢ່າງວ່ອງໄວ ເພາະວັນນະຄະດີລາວຈາກສະຕະວັດທີ XV-XVII ເພີ່ນແບ່ງອອກເປັນ **4** ປະເພດຄື:

1. ວັນນະຄະດີປະຫວັດສາດ ເຊັ່ນ: ໂອວາດເຈົ້າຟ້າງຸ່ມ, ຕໍານານບູຮານວັດຖຸຕ່າງໆ ເຊັ່ນ: ຕໍາເມືອງວຽງຈັນ, ຕໍານານເມືອງພວນ, ຕໍານານຫລວງພະບາງ, ອຸລັງຄະນິທານ, ຂຸນບູລົມ, ພື້ນພະແຊກຄໍາ, ພື້ນພະແກ້ວ.

2. ວັນນະຄະດີສັນລະເສີນສາສະໜາພຸດ ນັບແຕ່ເຈົ້າຟ້າງຸ່ມໄດ້ ນໍາເອົາພຣະພຸດທະສາສະໜາຈາກປະເທດຂະເໝນ ລັດທິຫີນະຍານເຂົ້າມາເຜີຍແຜ່ແລ້ວ ພຸດທະສາສະໜາເລີ່ມເຂົ້າມາມີບົດບາດສໍາຄັນຕໍ່ຈິດໃຈ ການດໍາລົງຊີວິດ

ແລະວັດທະນະທຳຂອງຄົນລາວ ນັກປາດຈຶ່ງແປຄຳສອນໃນພຣະໄຕປິດົກ ເຊັ່ນ: ເລື່ອງພຣະເຫວດສັນດອນຂອງພຣະມະຫາເທບຫລວງ.

3. ວັນນະຄະດີຄຳສອນ ແມ່ນອີງຫລັກທຳຄຳສອນພຣະພຸດທະສາສະໜາ ແລະພຣາມ ເຊັ່ນ: ນາງຕັນໄຕ, ສຽວສະຫລາດ, ອິນທິຍານສອນລູກ.

4. ກະວີນິຍາຍເຊັ່ນ: ທ້າວຮຸ່ງ ທ້າວເຈືອງ, ສັງສິນໄຊ, ກ່ຳກາດຳ, ແຕງອ່ອນ, ສຸລິວົງ, ກາລະເກດ, ປາແດກປາສະໝໍ, ພະຍາຄັນຄາກ ເປັນຕົ້ນ.

ລັກສະນະ ແລະພັດທະນາການຂອງວັນນະຄະດີລາວສະໄໝອານາຈັກລ້ານຊ້າງ ມັນຂຶ້ນຢູ່ກັບສະພາບການເມືອງໃນແຕ່ລະຍຸກສະໄໝ, ບາງສະໄໝກໍມີການຈົດບັນທຶກ ແລະ ບໍ່ມີການສ້າງວັນນະຄະດີໃໝ່ຂຶ້ນມາ ເພາະເກີດເສິກສົງຄາມ, ບາງສະໄໝມີການບັນທຶກ ແລະ ສ້າງວັນນະຄະດີເລື່ອງໃໝ່ຂຶ້ນມາຫລາຍເລື່ອງ. ເຮັດໃຫ້ມີຄວາມສືບເນື່ອງ ແຕ່ວັນນະຄະດີຍັງຄົງຢູ່ ແລະ ສອດຄ່ອງກັບວິຖີຄວາມເຊື່ອດັ້ງເດີມຂອງຄົນລາວ ກໍຄືວັນນະຄະດີທີ່ມີຮູບແບບ ແລະເນື້ອຫາທີ່ໄດ້ຮັບອິດທິພົນຈາກພຸດທະສາສະໜາ.

ເປັນທີ່ຮັບຮູ້ກັນແລ້ວວ່າ ວັນນະຄະດີ ແລະ ສັງຄົມມີຄວາມສຳພັນກັນໂດຍເຫດທີ່ກະວີ ຫລື ຜູ້ຜະລິດວັນນະຄະດີເປັນສະມາຊິກຂອງສັງຄົມ, ກະວີຍ່ອມໄດ້ຮັບອິດທິພົນຈາກສັງຄົມແລະໃນຂະນະດຽວກັນກະວີອາດມີອິດທິພົນຕໍ່ສັງຄົມບໍ່ຫລາຍກໍໜ້ອຍ. ໃນວັນນະຄະດີລາວລ້ານຊ້າງກໍເຊັ່ນດຽວກັນ ພົບວ່າວັນນະຄະດີຫລາຍເລື່ອງກະວີໄດ້ສະທ້ອນພາບສັງຄົມ ແລະ ວັດທະນະທຳຂອງລາວບູຮານອອກມາຢ່າງຊັດເຈນ ເຊັ່ນ: ຮີດສິບສອງ ຄອງສິບສີ່, ພື້ນຂຸນບູລົມ, ປູ່ສອນຫລານ, ອິນທິຍານສອນລູກ, ສ້ອຍສາຍຄຳຄຳກອນ. ວັນນະຄະດີເຫລົ່ານີ້ໄດ້ສະທ້ອນຈາຣີດນິຍົມປະເພນີຕ່າງໆ ທີ່ປະຊາຊົນຈະຕ້ອງປະຕິບັດຢ່າງເຄັ່ງຄັດ ອັນເປັນກົດເກນຂອງສັງຄົມລາວໃນອະດີດໄດ້ວາງແຜນໄວ້ເປັນແບບແຜນ. ນອກຈາກນັ້ນລັກສະນະສັງຄົມ ແລະ ວິຖີຊີວິດຂອງຜູ້ຄົນໃນວັນນະຄະດີກໍເປັນພາຍທີ່ສະທ້ອນລັກສະນະຂອງສັງຄົມ ແລະ ວິຖີຊີວິດຂອງປະຊາຊົນໃນສະໄໝນັ້ນເປັນຢ່າງດີ ເຊັ່ນ: ການແຕ່ງໂຕຂອງຜູ້ຄົນ, ການດຳເນີນຊີວິດ, ການປະກອບພິທີກຳ, ຄວາມເຊື່ອ, ຄ່ານິຍົມຕະຫລອດຮອດປະເພນີຕ່າງໆ (ທິດາສາລະຍາ,

2525:58-59). ລ້ວນແຕ່ເປັນສິ່ງທີ່ໄດ້ຍຶດຖືປະຕິບັດສືບຕໍ່ກັນມາໃນສັງຄົມ ດ້ວຍເຫດນີ້ ເພື່ອໃຫ້ເຂົ້າໃຈຄວາມເປັນໄປຂອງສັງຄົມ ແລະ ວິຖີຊີວິດຂອງກຸ່ມຄົນໃນທ້ອງຖິ່ນ.

ການສຶກສາວັນນະຄະດີລາວບູຮານຈຶ່ງມີຄວາມຈຳເປັນຢ່າງຍິ່ງ ໃນການສຶກສາວັນນະຄະດີລາວບູຮານ ເພື່ອຈະຮຽນຮູ້ຄວາມເປັນໄປຂອງສັງຄົມ, ວັນນະຄະດີທີ່ໃຫ້ຂໍ້ມູນເລື່ອງເຫລົ່ານີ້ ໄດ້ແກ່ຕຳນານທີ່ສືບທອດມາຮອດປັດຈຸບັນ ເພາະຜູ້ຂຽນໄດ້ບັນທຶກເລື່ອງລາວ ທີ່ກ່ຽວກັບປະຫວັດສາດທ້ອງຖິ່ນ ລວມທັງປະຫວັດການສືບສາສະໜາ, ຕຳນານສິ່ງສັກສິດທີ່ປະຊາຊົນສັກກາລະບູຊາ ເຊັ່ນ: ຕຳນານພະທາດ, ຕຳນານພຣະພຸດທະຮູບ ທີ່ປະສົມປະສານເລື່ອງລາວການສ້າງບ້ານແປງເມືອງ ຄວາມເຊື່ອໃນເລື່ອງປະລຳປະລາຕ່າງໆ ວັນນະຄະດີເຫລົ່ານີ້ມີຄຸນຄ່າຢ່າງຍິ່ງໃນການສຶກສາ, ເພື່ອໃຫ້ເຂົ້າໃຈໃນສິ່ງຕ່າງໆຢ່າງຊັດເຈນ. ການສຶກສາວິເຄາະທາງດ້ານສັງຄົມວິທະຍາ, ມະນຸດວິທະຍາ ແລະ ປະຫວັດສາດ. ໂດຍສະເພາະຢ່າງຍິ່ງການສະທ້ອນພາບໂຄງສ້າງທາງສັງຄົມຊ່ວຍໃຫ້ເຫັນຄວາມເປັນມາທີ່ບັນທຶກເປັນລາຍລັກອັກສອນ. ເພາະສະນັ້ນ ຈຶ່ງເປັນຂໍ້ມູນພື້ນຖານທີ່ນຳໄປສູ່ຄວາມເຂົ້າໃຈກ່ຽວກັບຄວາມເຄື່ອນໄຫວ ແລະ ຄວາມເຊື່ອຄວາມບັນດານໃຈຂອງຄົນໃນສັງຄົມທ້ອງຖິ່ນ ຍິ່ງກວ່ານັ້ນຍັງໃຫ້ຂໍ້ມູນສືບເນື່ອງກັບເລື່ອງລາວ ທີ່ເກີດເປັນປະຫວັດສາດອີກດ້ວຍ (ຍຸວະລີ ອະພິລັກພູສິດ, 2529:103).

ການສຶກສາປະຫວັດສາດທ້ອງຖິ່ນໃນປັດຈຸບັນ ນອກຈາກສຶກສາຂໍ້ມູນທາງຫລັກຖານບູຮານຄະດີແລ້ວ ວັນນະຄະດີທ້ອງຖິ່ນປະເພດຕຳນານ ກໍຍັງເປັນຫລັກຖານທີ່ສຳຄັນຢ່າງຍິ່ງ ອັນໜຶ່ງຈາກການສຶກສາກ່ຽວກັບວັນນະຄະດີປະເພດຕຳນານພົບວ່າວັນນະຄະດີທີ່ສະເໜີແນວຄິດເລື່ອງກຳເນີດສັງຄົມ ແລະ ການຕັ້ງຖິ່ນຖານ ເຊັ່ນ: ນິທານຂຸນບູລົມ ເປັນເລື່ອງລາວຂອງຄົນກຸ່ມໜຶ່ງ ເຊິ່ງອົບພະຍົບຈາກເໜືອລົງໃຕ້ເພື່ອຕັ້ງຫລັກແຫລ່ງພື້ນທີ່ເໝາະສົມກັບການປູກ, ລາຍລະອຽດຂອງເນື້ອຫາແມ່ນການເທີດທູນສະຖາບັນກະສັດແລະສະໜັບສະໜູນສິດທິອຳນາດອັນຊອບທຳຂອງກະສັດບູຮານ ສະທ້ອນພາບສັງຄົມວັດທະນະທຳສະໄໝອະດີດ ເຊິ່ງເປັນສັງຄົມທີ່ມີລະບົບເສດຖະກິດ ເພື່ອບໍລິໂພກພາຍໃນ

ຄອບຄົວປະຊາຊົນມີອາຊີບກະເສດຕະກຳ ແບບເພິ່ງພາອາໄສທຳມະຊາດ, ອາໄສແຮງງານຄົນ, ແຮງງານສັດໃນສ່ວນທີ່ກ່ຽວກັບນະໂຍບາຍທາງການເມືອງລະຫວ່າງລັດມຸ່ງເນັ້ນສຳພັນທະໄມຕີ (ຍົດ ສັນຕະສົມບັດ, 2530: 1). ນັກມະນຸດວິທະຍາສົນໃຈສຶກສາຄວາມເຊື່ອດັ້ງເດີມຂອງມະນຸດສະໄໝບູຮານ ເພື່ອທີ່ຈະທຳຄວາມເຂົ້າໃຈເຖິງວັດທະນະທຳຂອງຄົນໃນສັງຄົມນັ້ນ ເຊັ່ນ: ການເຄົາລົບນັບຖືຜີສາງເທວະດາ, ເທບພະເຈົ້າສິ່ງສັກສິດ ສະແດງອອກໃນຮູບການປະກອບພິທີກຳ ເພື່ອສ້າງສຳພັນທະພາບອັນດີລະຫວ່າງມະນຸດ ແລະ ອຳນາດເໜືອທຳມະຊາດ. ສຳຄັນເພື່ອໃຫ້ຕົນເອງມີຄວາມປອດໄພສາມາດເອົາຊະນະທຳມະຊາດໄດ້ ຄວາມເຊື່ອຈຶ່ງມີຄວາມສຳພັນກັບພຶດຕິກຳຂອງມະນຸດດັ່ງປາກົດໃນຮູບແບບພຶດຕິກຳ, ພິທີກຳຂະນົບທຳນຽມປະເພນີ ແລະ ວັດທະນະທຳຮູບແບບອື່ນໆ ຂອງສັງຄົມ.ວັນນະຄະດີນັ້ນເປັນຮູບແບບໜຶ່ງທີ່ມີຄວາມຜູກພັນກັບສັງຄົມຢ່າງແໜ້ນແຟ້ນ,ເພາະວັນນະຄະດີມັກຈະສະທ້ອນຊີວິດມະນຸດ ແລະ ສັງຄົມ. ຜູ້ປະພັນວັນນະຄະດີມັກເປັນສ່ວນໜຶ່ງຂອງສັງຄົມ. ດັ່ງນັ້ນ, ຜົນງານວັນນະຄະດີຍ່ອມຈະໄດ້ຮັບອິດທິພົນຈາກສັງຄົມທີ່ແວດລ້ອມດຳລົງຢູ່ຢ່າງຫລີກລຽງບໍ່ໄດ້ດັ່ງເຊັ່ນ: ສະພາບເສດຖະກິດ, ການເມືອງ, ວັດທະນະທຳຕະຫລອດຈົນຊີວິດໃນຮູບແບບລັກສະນະຕ່າງໆ ຂອງຜູ້ຄົນໃນສັງຄົມນັ້ນ.

ວັນນະຄະດີເລື່ອງທ້າວຮຸ່ງທ້າວເຈືອງນັ້ນມີຄວາມສຳຄັນ ແລະ ມີຄຸນຄ່າຢ່າງຍິ່ງ ໃນການສຶກສາເລື່ອງລາວໃນອະດີດຂອງຊົນເຜົ່າໄຕໃນດິນແດນລຸ່ມແມ່ນ້ຳຂອງ ແລະ ແມ່ນ້ຳກົກ ຕະຫລອດຮອດຂະນົບທຳນຽມ, ສິລະປະວັດທະນະທຳ ແລະວິຖີຊີວິດຂອງປະຊາຊົນ. ຈາກການສຶກສາຂອງ ທະວັດ ປຸນໂຍທົກ ໄດ້ກ່າວເຖິງກະສັດອົງນີ້ວ່າ: ທ້າວຮຸ່ງ ຫລື ຂຸນເຈືອງ ເປັນວິລະບູລຸດຂອງຊົນຊາດໄຕ-ລາວ ທີ່ເຄີຍລວບລວມລັດໄທຕ່າງໆ ເປັນອານາຈັກດຽວກັນສະໄໝກ່ອນປະຫວັດສາດ ນັ້ນຄືສະໄໝກ່ອນອານາ ຈັກລ້ານນາ, ກ່ອນອານາຈັກລ້ານຊ້າງ, ສະໄໝສຸໂຂໄທ ແລະ ອະຍຸດທະຍາ. ສະນັ້ນ, ຊີວະປະຫວັດ ທ້າວຮຸ່ງ ທ້າວເຈືອງ ຈຶ່ງເປັນເລື່ອງເລົ່າສືບປາກຕໍ່ປາກ ຜ່ານຄົນຊົ່ວອາຍຸໜຶ່ງ ສູ່ຄົນອີກຊົ່ວອາຍຸໜຶ່ງ ບໍ່ຂາດສາຍ ຈົນເຖິງສະໄໝທີ່ມີການຈົດບັນທຶກພົງສາວະດານ ປະຈຳແຄວັນຊົນເຜົ່າ ຫລື ນະຄອນລັດຕ່າງໆ ຜູ້ຈົດບັນທຶກພົງສາວະດານ ຫລື ຕຳນານບ້ານ ຕຳ

ນານເມືອງ, ຈຶ່ງໄດ້ບັນທຶກນາມ ທ້າວຮຸ່ງ ທ້າວເຈືອງ ເປັນກະສັດລວມຢູ່ໃນລາຊະວົງຂອງນະຄອນລັດນັ້ນໆ, ເຊິ່ງມີນະຄອນລັດຈຳນວນຫລວງຫລາຍທີ່ໄດ້ຍົກຍ້ອງຂຸນເຈືອງ ຫລື ທ້າວຮຸ່ງ ເປັນຕົ້ນ. ໂດຍສະເພາະພົງສາວະດານ ໃນກຸ່ມນະຄອນລັດພາກເໜືອ ເຊັ່ນ: ຕຳນານພື້ນເມືອງຊຽງໃໝ່, ພົງສາວະດານເມືອງເງິນຍາງຊຽງແສນ, ຕຳນານເມືອງພະເຢົາ, ພົງສາວະດານລ້ານນາໄທ, ພັບພື້ນເມືອງເລື່ອງຄ່າວຊຽງຮຸ່ງ, ຕຳນານພື້ນເມືອງສິບສອງພັນນາ (ທິດາ ສາລະຍາ, 2524:58). ຂຸນເຈືອງເປັນຕົວຢ່າງສຳຄັນຂອງບຸກຄົນໃນປະຫວັດສາດທີ່ມີລັກສະນະເປັນຜູ້ນຳທາງວັດທະນະທຳ Culture Hero ເຊິ່ງໄດ້ຮັບການຍອມຮັບນັບຖືທົ່ວໄປຈົນເກືອບເປັນວິລະບູລຸດເໜືອມະນຸດ ແລະ ບຸກຄົນມີຕົວຕົນຈິງໆສືບລົງມາໄດ້ເຖິງສະໄໝເມັງລາຍ ໃນຂະນະດຽວກັນໃນໄລຍະເວລາຂອງເຫດການທີ່ກ່ຽວກັບຂຸນເຈືອງ, ທີ່ເປັນໄລຍະເວລາທີ່ເຫດການຮ່ວມສະໄໝກ່ຽວກັບປະຫວັດສາດ ຄວາມເປັນມາຂອງຂຸນເຈືອງ ໃນຂອບເຂດທີ່ກວ້າງຂວາງຫລາຍຈົນຍາກທີ່ປະຕິເສດຄວາມຈິງກ່ຽວກັບຕົວຂຸນເຈືອງເສຍໄດ້.

ໃນປີ ພ.ສ 2486 (1943) ໄດ້ມີການຈັດພິມໜັງສືທີ່ນັບວ່າມີຄວາມສຳຄັນຢ່າງຍິ່ງເຫລັ້ມໜຶ່ງໃນວົງການວັນນະຄະດີຂຶ້ນເຜີຍແຜ່ຄືໜັງສືເລື່ອງທ້າວຮຸ່ງ ຫລື ທ້າວເຈືອງ ຜູ້ຈັດພິມຄືສົມເດັດພຣະມະຫາວິລະວົງ ສັງຄະນາຍົກ ໄດ້ຊີ້ແຈ້ງເຖິງທີ່ມາຂອງໜັງສືນີ້ວ່າ ຕົ້ນສະບັບຢູ່ຫໍສະໝຸດແຫ່ງຊາດ ບໍ່ມີໃຜຊາບວ່າໄດ້ມາແຕ່ເມື່ອໃດ ເມື່ອມະຫາສິລາ ວິລະວົງ ຄົ້ນພົບກໍພະຍາຍາມຄັດລອກປະລິວັດກ່າຍອອກມາຈາກພາສາລາວບູຮານມາເປັນພາສາໄທປັດຈຸບັນ. ໜັງສືເລື່ອງທ້າວຮຸ່ງ ຫລື ທ້າວເຈືອງ ນີ້ເປັນທີ່ປະຈັກແກ່ຜູ້ພົບເຫັນວ່າ ມີຄວາມສຳຄັນທາງດ້ານເນື້ອໃນ ແລະ ຮູບແບບ. ໃນດ້ານເນື້ອຫາເປັນເລື່ອງລາວຂອງຂຸນເຈືອງ ຫລື ພະຍາເຈືອງ ວິລະກະສັດສະໄໝບູຮານ ເປັນທີ່ກ່າວຂວັນໃນຕຳນານຕ່າງໆ (ປະຄອງ ນິມມານເໝິນ, 2530: 8-9). ການຈັດພິມໜັງສືເລື່ອງ ທ້າວຮຸ່ງ ຫລື ທ້າວເຈືອງ ໃນຄັ້ງນັ້ນເປັນຄັ້ງທຳອິດທີ່ມີການນຳວັນນະຄະດີເລື່ອງນີ້ອອກເຜີຍແຜ່ໃຫ້ເປັນທີ່ຮູ້ຈັກກັນຢ່າງກວ້າງຂວາງຂຶ້ນ. ຈິດ ພູມສັກ ໃນຜົນງານການຄົ້ນຄວ້າເລື່ອງຄວາມເປັນມາຂອງຄຳສະຫຍາມ ໄທລາວ ແລະຂອມ ແລະລັກສະນະທາງສັງຄົມຂອງເຊື້ອຊາດ ຈິດໄດ້ອາໄສຖ້ອຍຄຳພາສາທີ່ໃຊ້ໃນວັນນະຄະດີເລື່ອງ

ນີ້ໃນການວິເຄາະທີ່ມາ ແລະ ຄວາມໝາຍຂອງຄຳບູຮານຫລາຍຄຳ ນອກຈາກຈະຊີ້ໃຫ້ເຫັນວ່າເລື່ອງທ້າວຮຸ່ງ ຫລື ເຈືອງນີ້ໜ້າຈະເປັນຫລັກຖານຢ່າງໜຶ່ງ ໃນການສຶກສາກ່ຽວກັບປະຫວັດສາດຂອງຊົນເຜົ່າໄຕ-ລາວບູຮານໄດ້. ແລ້ວຍັງຍົກຍ້ອງວ່າ ເປັນໜັງສືທີ່ມີຄຸນຄ່າທາງດ້ານວັນນະຄະດີ ມີລັກສະນະເປັນມະຫາກາບທີ່ຍິ່ງໃຫຍ່ເລື່ອງໜຶ່ງ (ຈິດ ພູມສັກ, 2556:100) ກ່າວວ່າ ເລື່ອງທ້າວຮຸ່ງທ້າວເຈືອງ ນີ້ ເປັນເລື່ອງໃຫຍ່ທີ່ຍາວຫລາຍມີໂຄງທັງໝົດ 5000 ບາດກອນເປັນໜັງສືຊະນິດທີ່ເອີ້ນວ່າ "ມະຫາກາບ" ຄືເປັນບົດກະວີຂະໜາດໃຫຍ່ ແລະຍາວ ທີ່ແຕ່ງສັນລະເສີນວິລະບູລຸດຂອງຊົນຊາດ ເຮົາຈະຖືວ່າບົດກະວີຂະໜາດໃຫຍ່ ແລະ ຍາວທີ່ສັນລະເສີນຂຸນເຈືອງຊິ້ນນີ້ ເປັນເລື່ອງເພີ້ຝັນໄຮ້ຄວາມເປັນຈິງແບບນັ້ນບໍ ? ເມື່ອເຮົາເຊື່ອເລື່ອງພະລ່ວງ ເຊິ່ງຕ້ອງເຟັ້ນອອກຈາກນິຍາຍປະລຳປະລາເຕັມທີແລ້ວ ເປັນຫຍັງເຮົາຄືປະຕິເສດເລື່ອງຂຸນເຈືອງ ທີ່ມີເອກະສານບັນທຶກຄົບຊຸດ ທັງໃນພົງສາວະດານຂອງໄທເງິນຍາງທີ່ມີການສືບທອດມາໃນສະພາບເກືອບສົມບູນ ແລະ ທັງໃນມະຫາກາບທີ່ຍິ່ງໃຫຍ່ (ບໍ່ມີບົດກະວີຂອງອະຍຸດທະຍາ ແລະ ລັດຕະນະໂກສິນ ໃນປະເພດມະຫາກາບເລື່ອງໃດຈະຍິ່ງໃຫຍ່ເທົ່າທຽມໄດ້... ແມ່ນແຕ່ເຄິ່ງດຽວ) ວັນນະກຳເລື່ອງນີ້ເປັນເອກະສານປະຫວັດສາດ ທີ່ນັກປະຫວັດສາດຈະຕ້ອງສຶກສາບໍ່ຄວນເບິ່ງຂ້າມແນມກາຍ. ຜົນການຄົ້ນຄວ້າ ທີ່ກ່ຽວຂ້ອງກັບວັນນະຄະດີເລື່ອງທ້າວຮຸ່ງ ທ້າວເຈືອງຜ່ານມາ ສ່ວນຫລາຍຈະສຶກສາສະພາບຄວາມເປັນໄປເປັນມາຂອງເລື່ອງ, ຮູບການປະພັນ, ວິລະບູລຸດ, ການປຽບທຽບສະບັບຕ່າງໆ, ການແຜ່ຂະຫຍາຍຂອງເລື່ອງ ໃນພູມິພາກ ແຕ່ບໍ່ໄດ້ສຶກສາແນວຄິດທາງການເມືອງລົງເລິກໂດຍສະເພາະເປັນຕົ້ນ.

ດັ່ງນັ້ນ, ການສຶກສາມະຫາກາບທ້າວຮຸ່ງ ທ້າວເຈືອງ ໃນສອງປະເດັນທີ່ວາງໄວ້ຄື ສັນທະກະວີສະແດງອອກໃນເລື່ອງ, ຊີ້ໂຄງກອນຕ່າງໆຂອງລາວບູຮານ ແຍກອອກຢ່າງຈະແຈ້ງ ພ້ອມທີ່ຈະແຕ້ມໂຄງຮ່າງ ວິເຄາະຮູບແບບກອນ ແລະ ສຶກສາທາງດ້ານແນວຄິດທາງການເມືອງ, ການປົກຄອງ ແລະ ການຂະຫຍາຍ ແລະ ຮັກສາລັດໃນສະໄໝບູຮານ. ສິ່ງເຫລົ່ານັ້ນເປັນສິ່ງທີ່ມີ ແລະ ແອບແຝງເຊື່ອງຊ້ອນໃນວັນນະກຳໂດຍບໍ່ໄດ້ກ່າວອອກມາໂດຍກົງ ເພາະພຶດຕິກຳ

ຂອງຄົນລາວ ມັກທີ່ເປັນຄົນເກັບຄວາມຮູ້ສຶກເກົ່າ ການຖ່າຍທອດຄວາມຄິດຕ່າງໆ ຈຶ່ງເປັນການຖ່າຍທອດທາງລັກສະນະການຖ່າຍທອດທາງອ້ອມ ເຊິ່ງຮູບແບບຄຳສອນທີ່ແຝງສອດແຊກຢູ່ໃນເນື້ອເລື່ອງຂອງວັນນະກຳທ້າວຮຸ່ງທ້າວເຈືອງນັ້ນເປັນເລື່ອງທີ່ມີຄວາມກ່ຽວຂ້ອງກັບເລື່ອງການປົກຄອງ ຫລື ອາດເວົ້າໄດ້ອີກວ່າ ເປັນເລື່ອງຂອງຄວາມຄິດທາງອຳນາດການເມືອງ ອັນເປັນເລື່ອງທີ່ມີຄວາມກ່ຽວຂ້ອງກັບມະນຸດໃນທຸກຍຸກທຸກສະໄໝ ແລະ ທຸກສັງຄົມ. ການສຶກສາແນວຄິດທາງການເມືອງ, ນັກສັງຄົມສາດສ່ວນຫລາຍໃຫ້ຄວາມສົນໃຈໃນການສຶກສາຫລາຍປະເດັນ ເພາະເປັນເລື່ອງໃຫຍ່ໃນທາງການເມືອງ ການປົກຄອງ ແລະ ມີຄວາມສຳຄັນທັງລະບົບສັງຄົມຫລາຍ. ດັ່ງນັ້ນ, ການສຶກສາແນວຄິດທາງການເມືອງໃນມະຫາກາບທ້າວຮຸ່ງທ້າວເຈືອງນີ້ຈຶ່ງເປັນປະໂຫຍດໃນແງ່ການເສີມຄວາມເຂົ້າໃຈແນວຄິດທາງການເມືອງໃຫ້ສົມບູນຍິ່ງຂຶ້ນ ແລະຊ່ວຍໃຫ້ນັກສັງຄົມສາດ, ນັກລັດຖະສາດໄດ້ເຂົ້າໃຈຄວາມຄິດທາງການເມືອງໃນວັນນະຄະດີເລື່ອງນີ້ຫລາກຫລາຍມິຕິຍິ່ງຂຶ້ນ. ດັ່ງນັ້ນ, ການຕີຄວາມທາງວັນນະກຳ ຈຶ່ງໜ້າທີ່ຈະເປັນຫົນທາງໜຶ່ງໃນການຮຽນຮູ້ແນວຄິດທາງການເມືອງຂອງຜູ້ຄົນໃນອະດີດຜ່ານໃນຮູບການຕີຄວາມທາງວັນນະກຳ ແລະສາມາດນຳໄປໃຊ້ໃນການສຶກສາວິເຄາະ ເພື່ອເປັນປະໂຫຍດທີ່ຈະທຳຄວາມເຂົ້າໃຈ. ລັກສະນະສະເພາະເປັນພື້ນຖານທາງການເມືອງຂອງຄົນໃນບໍລິເວນນີ້ ເພື່ອເປັນການນຳໄປໃຊ້ໃນການອະທິບາຍສະຖານະການ ແລະ ປາກົດການຕ່າງໆ ທາງການເມືອງໄດ້ໃນລະດັບໜຶ່ງ ເພາະແນວຄິດບໍລິບົດໜຶ່ງໆ ອາດຈະບໍ່ສາມາດນຳໄປໃຊ້ໄດ້ໃນບໍລິບົດໜຶ່ງໄດ້ຢ່າງສົມບູນ ຈຳເປັນຕ້ອງມີການປັບປ່ຽນແປງໄປ.

## 1.2 ວັດຖຸປະສົງຂອງການຄົ້ນຄວ້າ

ການສຶກສາແນວຄິດທາງການເມືອງໃນມະຫາກາບທ້າວຮຸ່ງທ້າວເຈືອງຄັ້ງນີ້ມີວັດຖຸປະສົງດັ່ງຕໍ່ໄປນີ້:

1. ເພື່ອສຶກສາຫລັກສັນທະກະວີໃນມະຫາກາບທ້າວຮຸ່ງ ທ້າວເຈືອງ

2. ເພື່ອສຶກສາແນວຄິດທາງການເມືອງ, ການປົກຄອງ ໃນມະຫາກາບທ້າວຮຸ່ງ ທ້າວເຈືອງ.

## 1.3 ຂອບເຂດຂອງການຄົ້ນຄວ້າ

ກ. ຂອບເຂດການສຶກສາຄົ້ນຄວ້າຂໍ້ມູນເອກະສານມີດັ່ງນີ້:

1. ມະຫາກາບທ້າວຮຸ່ງ ທ້າວເຈືອງ ລິດຈະນາໂດຍ ມະຫາສິລາ ວິລະວົງ, ອະທິບາຍຖອດຄວາມ ດວງເດືອນ ບຸນຍາວົງ ແລະ ຄະນະ. ຈັດພິມໂດຍ ພາກວິຊາພາສາລາວ-ວັນນະຄະດີລາວ ມະຫາວິທະຍາໄລແຫ່ງຊາດ, ເຫລັ້ມ 1, 2 ປີ 2003.

ໃນການສຶກສາຄັ້ງນີ້ຜູ້ສຶກສາວັນນະກຳມະຫາກາບທ້າວຮຸ່ງທ້າວເຈືອງ ສະບັບປະລິວັດໂດຍ ມະຫາສິລາ ວິລະວົງ, ອະທິບາຍຖອດຄວາມ ດວງເດືອນ ແລະຄະນະເປັນຫລັກສ່ວນຂໍ້ມູນທີ່ປາກົດໃນສະບັບອື່ນໆ ນອກຈາກຈະນຳມາເປັນຂໍ້ມູນປະກອບການວິເຄາະເທົ່ານັ້ນ. ເນື່ອງຈາກວັນນະກຳເລື່ອງທ້າວຮຸ່ງທ້າວເຈືອງໃນປະເທດລາວ ໃນພາກອີສານ ແລະ ລ້ານນາ ປະເທດໄທ ມີຢູ່ຫລາຍສຳນວນທີ່ຍັງບໍ່ໄດ້ປະລິວັດ ທີ່ມີປະລິວັດແລ້ວ 6 ສະບັບ ເປັນເອກະສານປະກອບໃນການຄົ້ນຄວ້າຄັ້ງນີ້:

❶ ມະຫາກາບທ້າວຮຸ່ງທ້າວເຈືອງສະບັບສົມບູນລິດຈະນາໂດຍ ມະຫາສິລາ ວິລະວົງ ຈັດພິມໂດຍ ສະຖາບັນຄົ້ນຄວ້າສິລະປະວັນນະຄະດີ 1988.

❷ ຕຳນານພະຍາເຈືອງ ເຫລັ້ມ 1, 2 ສະບັບວັດເໝືອງໝໍ້ ຈັງຫວັດແພ່ ປະລິວັດ ອະລຸນວັດ ວິຊຽນຂຽວ ແລະ ສິທົນ ຄຳແປງ. ຄະນະສັງຄົມສາດ ມະຫາວິທະຍາໄລຊຽງໃໝ່ 2524.

❸ ທ້າວຍີ່-ບາເຈືອງ ສະບັບວັດໂພສີ ອຳເພີທ່າລີ່ ຈັງຫວັດເລີຍ ປະລິວັດ ດະນຸພົນ ໄຊຍະສິນ ແລະ ທອງສຸກ ຈາລຸເມທີຊົນ 2524.

❹ ວັງສະມາລີນີບາເຈືອງ ສະບັບວັດນາວຽງ ຈັງຫວັດຍະໂສທອນ ປະລິວັດ ພຣະອະຣິຍານຸວັດ ເຈົ້າອາວາດວັດມະຫາໄຊ ອຳເພີເມືອງ ຈັງຫວັດສາລະຄາມ 2526.

❺ ທ້າວຮຸ່ງ ຫລືເຈືອງ ສະບັບປີຊາ ພິນທອງ ຣຽບຣຽງ ແລະ ປະລິວັດຈາກສະບັບເດີມຂອງ ມະຫາສິລາ ວິລະວົງ ພິມເຜີຍແຜ່ 2529.

❻ ວັນນະກຳເລື່ອງທ້າວຮຸ່ງ ຫລືເຈືອງ ສະບັບຫໍສະໝຸດແຫ່ງຊາດ ກົມສິລະປະກອນ ປະລິວັດ ສິລາ ວິລະວົງ ພິມເປັນທີ່ລະນຶກເນື່ອງໃນງານພະລາຊະທານເພີງສົບ 2486.

## 1.4 ປະໂຫຍດຄາດວ່າຈະໄດ້ຮັບ

1. ເພື່ອເປັນເອກະສານຄົ້ນຄວ້າໜຶ່ງປະກອບສ່ວນເຂົ້າໃນການສຶກສາວັນນະຄະດີລາວບູຮານລ້ານຊ້າງ.

2. ເພື່ອເຮັດໃຫ້ເກີດຄວາມຮູ້ຄວາມເຂົ້າໃຈໃນລະບົບວິຖີຊີວິດ, ສັງຄົມ, ວັດທະນະທຳ ຕະຫລອດຮອດແນວຄິດທາງການເມືອງ ຂອງຜູ້ຄົນໃນອະດີດໂດຍຜ່ານທາງການສະທ້ອນທາງວັນນະຄະດີ.

3. ເພື່ອນຳແນວຄິດທີ່ໄດ້ຈາກການສຶກສາມາພັດທະນາ ແລະປັບໃຊ້ໃນການດຳລົງຢູ່ໃນສັງຄົມປັດຈຸບັນ.

4. ເພື່ອອະນຸລັກວັນນະຄະດີບູຮານອັນເປັນມໍລະດົກອັນລ້ຳຄ່າຂອງຊາດໃຫ້ຄົງຢູ່ ແລະ ອາດເປັນຕົວກະຕຸ້ນໃຫ້ມີການສົນໃຈໃນການສຶກສາຕໍ່ໆ ໄປ.

5. ເພື່ອເຮັດໃຫ້ເຂົ້າໃຈຄວາມຄິດ ຄວາມເຊື່ອຕະຫລອດຮອດທັດສະນະຄະຕິຂອງຜູ້ປະພັນວັນນະຄະດີ ເຊິ່ງມີບົດບາດຕໍ່ສັງຄົມວ່າ ນັກຄິດນັກປະພັນໃນອະດີດມີບົດບາດແນວໃດ ໃນການນຳສະເໜີຕໍ່ສັງຄົມໃນຍຸກນັ້ນ.

24/VII ຫ້າມຈຳໜ່າຍ

# ບົດທີ ໒
# ນິທານຕຳນານ ແລະ ເລື່ອງເລົ່າພື້ນບ້ານ

## 2.1 ເລື່ອງທ້າວຮຸ່ງ ທ້າວເຈືອງ ໂດຍສັງເຂບ.

ທ້າວຮຸ່ງ ເປັນລູກຊາຍຜູ້ທີສອງຂອງພະຍາຈອມທຳ ທີ່ປົກຄອງເມືອງສວນຕານ ຫລື ເມືອງນາຄອງ ທ້າວຮຸ່ງ ເກີດຕອນຂ້ອນແຈ້ງ ເມື່ອເດືອນ 5 ເພັງປີຂານ ໄດ້ຍາມວິສາຂະ ພໍ່ແມ່ພີ່ນ້ອງທັງຫລາຍຈຶ່ງໃສ່ຊື່ວ່າທ້າວຮຸ່ງ ແຕ່ຄົນສ່ວນຫລາຍເຂົາເອີ້ນວ່າ ທ້າວເຈືອງ ຕອນເກີດມາໃໝ່ໆ ນັ້ນ ໄດ້ມີພວກຂ້າພາງດຳນຳເອົາດາບກ້າ ກັບຄ້ອງເງິນຄູ່ໜຶ່ງມາຖວາຍ ຕໍ່ມາກໍໄດ້ຊ້າງເຜືອກອີກໂຕໜຶ່ງຊື່ວ່າ ພານຄຳ ເຊິ່ງເປັນຊ້າງທີ່ໄດ້ມາຈາກປ່າຫິມະພານ.

ເມື່ອໃຫຍ່ເປັນເປັນບ່າວຂຶ້ນມາພໍ່ກໍໄດ້ຕາຍຈາກໄປ ທ້າວຮຸ່ງ ຈຶ່ງໄດ້ພະຍາຍາມເຝິກຝົນ ແລະ ສ້າງຕັ້ງກອງທັບໄວ້ ເພື່ອເປັນການປ້ອງກັນເມືອງ ທຸກໆມື້ທ້າວຮຸ່ງ ຈະເຝິກຝົນການຕໍ່ສູ້ເທິງຫລັງຊ້າງ ໃນຄະນະນີ້ໆ ເອງທ້າວຮຸ່ງ ເກີດຮັກມັກກັບນາງງ້ອມ ຫລື ງ້ອມມ່ອນ ເຊິ່ງເປັນລູກສາວຂອງເຈົ້າເມືອງຊຽງເຄືອ ຈຶ່ງໄດ້ແຕ່ງຕັ້ງໃຫ້ແອງຄອນ ເປັນເຖົ້າແກ່ໄປສູ່ຂໍໃຫ້, ຜູ້ເປັນແມ່ຂອງນາງງ້ອມເປັນເອື້ອຍແມ່ທ້າວຮຸ່ງ ເຊິ່ງທ້າວຮຸ່ງ ໄດ້ເອີ້ນວ່າປ້າແລະເອີ້ນນາງງ້ອມວ່າເອື້ອຍອີກຢ່າງ ແມ່ຂອງນາງງ້ອມກໍເປັນທັງເມງ ແລະ ຂອມ ຄ່າດອງຂອງນາງງ້ອມນັ້ນ ແມ່ຂອງນາງຮຽກຮ້ອງເອົາແພງຫລາຍກ່າວຄື: ໄຖ ແລະ ຄວາຍ ຢ່າງລະໝື່ນ, ສາວໃຊ້ 3000 ຄົນ ແລະ ເງິນຄຳອີກເປັນຈຳນວນຫລວງຫລາຍ ເຮັດໃຫ້ທ້າວຮຸ່ງ ບໍ່ສາມາດຫາເອົາຄ່າດອງມາສູ່ຂໍຕາມຄວາມຕ້ອງການຂອງແມ່ນາງ

# ຂໍໂທດຫຼາຍໆ



ປຶ້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ